# ຄູ່ມືແນະນຳ ແລະ ການນຳໃຊ້

## ແນວພັນເຂົ້າ ເມືອງໄຊ 1 (Meung Xay 1)



ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
ອົງການອອກຟາມ
ພະແນກກະສິກຳ ແລະ ປ່າໄມ້ ແຂວງອຸດົມໄຊ

# ປະຫວັດຂອງແນວພັນ

ແນວພັນເມືອງໄຊ 1 ຫລື ສາຍພັນ TDK 10493-B-B-5-2-1 ແມ່ນໄດ້ຈາກການປັບປຸງພັນດ້ວຍການປະສົມພັນລະຫວ່າງ ແນວພັນ ທ່າດອກຄຳ 11 ກັບ Til 4 (IR84639-7-97-6-6-2-2-4-2-2-2-B (Introgression line, yield-promising at IRRI)) ໃຊ້ຮູບແບບການປະສົມພັນແບບດ່ຽວເຊິ່ງແມ່ນປະສົມຢູ່ສູນຜະລິດແນວພັນເຂົ້າ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ຈາກນັ້ນໄດ້ນຳເອົາໄປທົດລອງຢູ່ໂຮງຮຽນຊາວນາກຸ່ມບ້ານ ລ້ອງຢາ, ເມືອງໄຊ, ແຂວງອຸດົມໄຊ ລະດູຝົນໃນປີ 2019,ໄດ້ນຳເອົາສາຍພັນດັ່ງກ່າວ ໄປຄັດເລືອກໃນພື້ນທີ່ນາຂອງຊາວກະສິກອນ,ບ້ານບໍ່,ບ້ານດອນແກ້ວ,ບ້ານນາໝີ, ເມືອງໄຊ ແລະ ຍັງໄດ້ແລກປ່ຽນກັບຊາວນາຈາກຕ່າງແຂວງ ໃນງານແລກປ່ຽນແນວພັນຢູ່ສູນຄົ້ນຄ້ວາເຂົ້າ ປີ2019,. ໃນປີ 2021 ໄດ້ປູກຂະຫຍາຍເມັດ ແລະ ເອົາໄປປູກປຽບທຽບຜົນຜະລິດ ຢູ່ 18 ບ້ານ ໃນ 6 ແຂວງ (ອຸດົມໄຊ, ຫລວງພະບາງ, ໄຊຍະບູລີ, ວຽງຈັນ, ສາລະວັນ ແລະ ອັດຕະປື) ເຫັນວ່າການຈະເລີນເຕີບໂຕດີ, ທົນທານຕໍ່ສະພາບແວດລ້ອມໄດ້ດີ, ທົນທານຕໍ່ພະຍາດ ແລະ ແມງໄມ້ໄດ້ດີ,ປູກໄດ້ໃນດິນທຸກປະເພດສາມາດເກັບກ່ຽວໄດ້ໃນເຂດພື້ນທີ່ແຫ້ງແລ້ງຜົນຜະລິດປານກາງ ຕັ້ງແຕ່ 3,5 ຫາ 5 ໂຕນ/ເຮັກຕາ ສະເລ່ຍ 18 ບ້ານ ຜົນຜະລິດສະເລັຍ 4,5 ໂຕນ/ເຮັກຕາ

# ລັກສະນະເດັ່ນຂອງແນວພັນ ເມືອງໄຊ 1

1. ເໝາະກັບດິນທຸກປະເພດ
2. ທົນພະຍາດໃຫມ້ ,ປັບຕົວກັບສະພາບແວດລ້ອມໄດ້ດີ,
3. ຮວງໃຫຍ່, ຍາວ.
4. ຜົນລິດດີ 4,5-5 ໂຕນ/ເຮັກຕາ
5. ລົດຊາດອ່ອນ, ນຸ່ມ.



## ຕາຕະລາງປຽບທຽບລັກຊະນະ ເມືອງໄຊ 1 ກັບພໍ່ແມ່ພັນ

| ແນວພັນເຂົ້າ | ເມືອງໄຊ 1 | Til 4 (IR84639-7-97-6-6-2-2-4-2-2-2-B | TDK11 |
|---|---|---|---|
| ປະເພດເຂົ້າ | ເຂົ້າໜຽວ | ເຂົ້າໜຽວ | ເຂົ້າໜຽວ |
| ສີເມັດ | ສີເຫຼືອງແດງ | ຂາວ | ນ້ຳຕານ |
| ອາຍຸ (ວັນ) | 130-135 | 135-140 | 150 |
| ລະດູປູກ | ປູກໄດ້ທັງ 2 ລະດູ | ແລ້ງ ແລະ ຝົນ | ຝົນ |
| ລວງສູງ (ຊມ) | 130-135 | 110 | 145-160 |
| ເປີເຊັນການສີ (%) | 63-65 % | | 60% |
| ຜົນຜະລິດ (ໂຕນ/ເຮັກຕາ) | 4-4,5 | 3.5-4 | 4-4,5 |
| ຈຸດເດັ່ນຂອງແນວພັນ | ທົນທ່ານພະຍາດໃຫມ້ ,ປັບຕົວກັບໄດ້ດີກັບ ຫລາຍສະພາບແວດ ລ້ອມ,ທົນບົ່ວ | | ທົນທ່ານ ພະຍາດໃຫມ້, ທົນທານຕໍ່ບົ່ວ |



# ແນະນຳການປູກ




ແນວພັນ ເມືອງໄຊ 1 ສາມາດປູກໄດ້ 2 ລະດູຄື: ນາແຊງ ແລະ ນາປີ.

ວິທີການປູກ:

- ນາດຳແມ່ນແນະນຳ ຕົກກ້າ ຊ່ວງເດືອນ 5 ລະວ່າງວັນທີ່ 1-15 , ຫຼັງຈາກຕົກກ້າໄດ້ 20-25 ວັນ ສາມາດນຳໄປປັກດຳໄດ້
- ນາຫວານ ຫລື ນາຢອດແຫ້ງ ແນະນຳໃຫ້ປູກຊ່ວງເດືອນ 6 ວັນທີ່ 15-30

**ການໃສ່ຝຸ່ນ** ນາດິນຊາຍ ໃຫ້ໃສ່ຝຸ່ນປະສົມສູດ 15-15-15 ໃນອັດຕາ200 ກລ/ຮຕ, ນາດິນໜຽວໃສ່ຝຸນປະສົມສູດ 16-20-00 ໃນອັດຕາ 200 ກລ/ຮຕ, ຫຼັງຈາກປັກດຳໄດ້ 5 -7 ມື້ ແລະ ໃຫ້ໃສ່ຝຸ່ນເລັ່ງ 2 ຄັ້ງ: ສູດ 46 0 0 ຫຼັງຈາກປັກດຳໄດ້ 25 ມື້ ແລະ 45 ມື້ ໃນອັດຕາ 30 ກລ/ຮຕ/ຄັ້ງ.




# ການເກັບກ່ຽວ

ເໝາະສົມໃນການນຳໃຊ້ກົນຈັກເກັບກ່ຽວເຊິ່ງສາມາດເກັບກ່ຽວໄດ້ພາຍໃນ 35 ວັນ ນັບແຕ່ວັນອອກດອກໄດ້ 50%, ຫ້າມກ່ຽວຊ້າເພາະຈະເຮັດໃຫ້ເຂົ້າຫັກໃນເວລາສີເຮັດໃຫ້ເປີເຊັນເຂົ້າສານປະເພດ 1 ຕໍ່າ, ຖ້າໃຊ້ແຮງງານຄົນເກັບກ່ຽວຄວນຕາກຝ່ອນເຂົ້າໃນທົ່ງນາປະມານ 2-3 ແດດ ຈຶ່ງເກັບກູ້ ແລະ ຟາດຕີ

**ຕິດຕໍ່ປະສານແນວພັນ**

**ເຂົ້າເມືອງ ໄຊ 1**

**ໂທ: .020 52038434.**